# ການເຊື່ອມສານ ເອົາບັນດາເປົ້າໝາຍ SDGs ເພື່ອການພັດທະນາການລ້ຽງສັດ ແບບຍືນຍົງ

ໂດຍ: ພັນທະວົງ ວົງສຳພັນ
ກົມລ້ຽງສັດ ແລະ ການປະມົງ

ໃນປີ 2015 ບັນດາປະເທດສະມາຊິກ ສະຫະປະຊາຊາດ (United Nation, UN) 193 ປະເທດ ໄດ້ຮ່ວມກັນຮັບຮອງ ເອົາເປົ້າໝາຍການພັດທະນາແບບຍືນຍົງ (Sustainable Development Goals, SDGs) ປ່ຽນແທນເປົ້າໝາຍພັດທະນາສະຫະສະວັດ (Millennium Development Goals, MDGs) ເພື່ອເປັນແນວທາງການພັດທະນາໃນໄລຍະ 15 ປີຕໍ່ໜ້າ (2016-2030) ຂອງລັດຖະບານ, ອົງການຈັດຕັ້ງສາກົນ, ສັງຄົມ ແລະ ສະຖາບັນອື່ນໆໂດຍກຳນົດໄວ້ 17 ເປົ້າໝາຍ ກັບ 169 ຕົວຊີ້ບອກ (ສະເພາະ ສປປ ລາວ ໄດ້ບອກເອົາເປົ້າໝາຍການເກັບກູ້ລູກລະເບີດບໍ່ທັນແຕກເພີ້ມເຂົ້າອີກ 1 ເປົ້າໝາຍ) ໂດຍວາລະການພັດທະນາແບບຍືນຍົງ (Agenda of Sustainable Development, ASD) ໄດ້ຖືກຮອງຮັບເພື່ອນຳໃຊ້ກັບທຸກປະເທດ.

ສະນັ້ນ, ກົມລ້ຽງສັດ ແລະ ການປະມົງ ໂດຍສະເພາະຂະແໜງການລ້ຽງສັດ ກໍ່ໄດ້ຜັນຂະຫຍາຍ ແລະເຊື່ອມສານເອົາບັນດາເປົ້າໝາຍ SDGs ດັ່ງກ່າວເພື່ອພັດທະນາການລ້ຽງສັດແບບຍືນຍົງ (Sustainable Livestock Development, SLD)ໃນ ສປປ ລາວ.

ການລ້ຽງສັດມີຄວາມສຳຄັນບໍ່ພຽງແຕ່ເປັນແຫລ່ງສະບຽງອາຫານ ແລະ ໂພຊະນາການທີ່ຈຳເປັນເພື່ອສຸຂະພາບຂອງຄົນເທົ່ານັ້ນ, ແຕ່ຍັງປະກອບສ່ວນໃນການ ສ້າງລາຍຮັບໃຫ້ຄອບຄົວ, ສ້າງອາຊີບຄົງທີ່, ສ້າງວຽກເຮັດງານທຳ, ສ້າງຄວາມເທົ່າທຽມໃນສັງຄົມ ແລະ ປະກອບສ່ວນພັດທະນາເສດຖະກິດຂອງຊາດ, ການລ້ຽງສັດທີ່ດີຈະເປັນການປະກອບ ສ່ວນສຳຄັນໃນການຮັກສາສະພາບແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ.




ການເຊື່ອມສານເອົາບັນດາເປົ້າໝາຍ SDGs ເພື່ອການພັດທະນາການລ້ຽງສັດແບບຍືນຍົງໄດ້ແບ່ງອອກເປັນ 3 ກຸ່ມໃຫຍ່ຄື:

1) ເປົ້າໝາຍການພັດທະນາດ້ານສັງຄົມ ແລະ ຄວາມຢູ່ດີກິນດີຂອງຄົນ (ປະກອບດ້ວຍ ບໍ່ມີຄວາມທຸກຍາກ, ຄວາມອຶດຫິວໝົດໄປ, ສຸຂະພາບ ແລະ ການສຶກສາທີ່ດີ, ມີຄວາມເທົ່າທຽມທາງເພດ, ຫລຸດໂຕນຄວາມບໍ່ເທົ່າທຽມກັນໃນສັງຄົມ, ມີສັນຕິພາບ ແລະ ຄວາມເປັນທຳ)
2) ເປົ້າໝາຍການອະນຸລັກຮັກສາຊັບພະຍາກອນ ທຳມະຊາດ (ນໍ້າ, ລະບົບພະລັງງານ, ຄວາມຫລາກຫລາຍດ້ານຊີວະນາໆພັນ, ແລະ ສະພາບອາກາດ)
3) ເປົ້າໝາຍສ້າງໃຫ້ເກີດຄວາມສົມດຸນທີ່ດີຂຶ້ນ ນຳໃຊ້ການມີສ່ວນຮ່ວມທຸກພາກສ່ວນ ດັ່ງມີລາຍລະອຽດດັ່ງລຸ່ມນີ້:




## SDGs : ກັບການພັດທະນາດ້ານສັງຄົມ ແລະ ຄວາມຢູ່ດີກິນດີຂອງຄົນ

## ເປົ້າໝາຍທີ 1: ບໍ່ມີຄວາມທຸກຍາກ

ທຳມະຊາດ

ລະບົບ ການ ລ້ຽງສັດ

ຄົນ




✓ມີ 900 ລ້ານຄົນຍັງທຸກຍາກ, ລາຍໄດ້ຕ່ຳກວ່າ **$1.9/ມື້(WB 2015)** ແລະ ປະມານເຄິ່ງໜຶ່ງຍັງອາໃສການລ້ຽງສັດເປັນອາຊີບຕົ້ນຕໍ

✓ສປປ ລາວ ມີ **77 %** ຂອງຄົວເຮືອນອາໃສກະສິກຳໃນນັ້ນ, **94%** ແມ່ນຊາວກະສິກອນຂະໜາດນ້ອຍ ແລະ **89%** ແມ່ນອາໃສການລ້ຽງສັດ ແລະ **50%** ລາຍຮັບຂອງຄົວເຮືອນໄດ້ຈາກຜົນຜະລິດສັດ

**ການລ້ຽງສັດປະກອບສ່ວນເຮັດໃຫ້ຄວາມທຸກຍາກຫລຸດລົງ**

– ການເຂົ້າເຖິງນະໂຍບາຍ, ຊັບພະຍາກອນ

– ການປັບປຸງການຜະລິດ

– ການເພີ້ມການມີສ່ວນຮ່ວມ ການຕະຫລາດ

## ເປົ້າໝາຍທີ 2 : ຄວາມອຶດຫິວໝົດໄປ

ທຳມະຊາດ

ລະບົບ ການ ລ້ຽງສັດ

ຄົນ




✓ຊີ້ນສັດສະໜອງທາດພະລັງງານ 10% ຂອງກິໂລກະລໍຣີທັງໝົດ ແລະ ສະເລ່ຍ 33%ຂອງທາດຊີ້ນໃນອາຫານທີ່ບໍລິໂພກຢູ່ໃນຄົວເຮືອນ (ກລປ, 2016)

**ການລ້ຽງສັດປະກອບສ່ວນເຮັດໃຫ້ຄວາມອຶດຫິວຫລຸດລົງ**

– ການລ້ຽງສັດແບບເປັນຟາມ ປະກອບສ່ວນສຳຄັນໃນການຄ້ຳປະກັນດ້ານສະບຽງອາຫານ ຊ່ວຍຕອບສະໜອງດ້ານໂພຊະການທີ່ຈຳເປັນໃຫ້ສັງຄົມ

– ມູນສັດຍັງເປັນຝຸ່ນຊີວະພາບຊັ້ນດີສຳລັບການປູກຝັງໃນຄົວເຮືອນເປັນການເພີ້ມຜົນຜະລິດທາງການປູກຝັງ ສ້າງເສດຖະກິດ-ລາຍຮັບ

–ການຫລຸດຜ່ອນການແຂ່ງຂັນດ້ານອາຫານ*food-feed competition* ລະຫວ່າງສັດ ແລະຄົນ ໂດຍສົ່ງເສີມການນຳໃຊ້ອາຫານສັດທີ່ຄົນບໍ່ສາມາດນຳໃຊ້ໄດ້(ຫຍ້າ, ສິ່ງເສດເຫລືອກະສິກຳປຸງແຕ່ງ...)ເພື່ອເພີ່ມຜົນຜະລິດສັດເປັນທາງເລືອກບູລິມະສິດ

# ເປົ້າໝາຍທີ 3 : ມີສຸຂະພາບ ແລະ ຊີວິດການເປັນຢູ່ທີ່ດີ

ທຳມະຊາດ

ລະບົບ
ການ
ລ້ຽງສັດ

ຄົນ

3 GOOD HEALTH AND WELL-BEING

✓ຊີ້ນສັດລ້ຽງມີໂພຊະນາການທີ່ຈຳເປັນຕໍ່ສຸຂະພາບ ໂດຍສະເພາະ ໃນເດັກນ້ອຍ ແມ່ມານ, ຜູ້ສູງອາຍຸ ສາມາດຫລຸດຜ່ອນໂຕເຕ້ຍ ແລະ ການຕາຍເດັກໃນທ້ອງໄດ້...

–ຊີ້ນສັດລ້ຽງສະໜອງ ວິຕາມິນ ແລະ ແຮ່ທາດທີ່ຈຳເປັນໃຫ້ແກ່ຄົນເຮົາເຊັ່ນ: ວິຕາມິນ A, ວິຕາມິນ B-12, ໄຣໂບຟຣາບິນ, ແຄລຊຽມ, ທາດເຫລັກ, ທາດສັງກະສີ... ທີ່ບໍ່ມີ ຫລື ຫາໄດ້ຍາກຈາກພືດ

–ຜະລິດອາຫານປອດໄພ (food safety)ແລະ ຕໍ່ຕ້ານການໃຊ້ສານກະຕຸ້ນ, ສານເຄມີ ເພື່ອການລ້ຽງສັດ

–ຄວບຄຸມ ແລະ ປ້ອງກັນການລະບາດ ຂອງພະຍາດສັດໂດຍສະເພາະສັດ-ສູ່ຄົນ: ໄຂ້ຫວັດສັດປີກ, ຫູໝູກ່ຳ,ປາກເປື່ອຍລີ້ງເລັບ..ແມ່ນປັດໃຈສຳຄັນດ້ານສຸຂະພາບ

# ເປົ້າໝາຍທີ 4 : ການສຶກສາທີ່ມີຄຸນນະພາບ

ທຳມະຊາດ

ລະບົບ
ການ
ລ້ຽງສັດ

ຄົນ

4 QUALITY EDUCATION

✓ອາຫານເພື່ອສຸຂະພາບ ແມ່ນສິ່ງຈຳເປັນທີ່ຕ້ອງໄດ້ຮຽນຮູ້

– ການລ້ຽງສັດບໍ່ພຽງແຕ່ສະໜອງ ທາດຊີ້ນ ແລະ ໂພຊະນາການທີ່ຈຳເປັນ ແຕ່ຍັງໄດ້ປະກອບສ່ວນສ້າງລາຍຮັບ ແລະ ສະໜັບສະໜູນເດັກນ້ອຍໄດ້ຮັບການສຶກສາ

– ເຊື່ອມສານວຽກງານໂພຊະນາການເຂົ້າໃນຫລັກສູດການຮຽນ-ການສອນ

– ຊຸກຍູ້ສົ່ງເສີມ ໂຮງຮຽນປະຖົມ ໃຫ້ມີກິດຈະກຳກ່ຽວກັບການລ້ຽງສັດ ຜົນຜະລິດສັດ ຕົວຢ່າງ: ໄຂ່ ເປັນອາຫານກາງເວັນໃຫ້ນັກຮຽນໃນໂຮງຮຽນ

## ເປົ້າໝາຍທີ 5 : ຄວາມເທົ່າທຽມທາງເພດ

ທຳມະຊາດ

ລະບົບການລ້ຽງສັດ

ຄົນ

5 GENDER EQUALITY

✓ປະມານ 2/3 ຂອງຊາວກະສິກອນຜູ້ລ້ຽງສັດຂະໜາດນ້ອຍ ຫລື 290 ລ້ານຄົນໃນທົ່ວໂລກ ແມ່ນຜູ້ຍິງ (ໂດຍສະເພາະແມ່ນການລ້ຽງສັດນ້ອຍ ແລະ ງົວນົມ)

– ການສົ່ງເສີມເພີ້ມຂີດຄວາມສາມາດ ໃຫ້ຜູ້ຍິງໄດ້ມີໂອກາດຮັບການຝຶກອົບຮົມດ້ານເຕັກນິກ ແລະ ການຈັດການ, ເຂົ້າເຖິງປັດໃຈ ການຜະລິດ ແລະ ທຶນເປັນສິ່ງທີ່ຈຳເປັນ

## ເປົ້າໝາຍທີ 10 : ຫລຸດໂຕນຄວາມບໍ່ເທົ່າທຽມກັນໃນສັງຄົມ

ທຳມະຊາດ

ລະບົບການລ້ຽງສັດ

ຄົນ

10 REDUCED INEQUALITIES

✓ການລ້ຽງສັດ ເຮັດໃຫ້ສາມາດ ສ້າງລາຍຮັບ, ສ້າງວຽກເຮັດງານທຳ ແລະ ສ້າງໂອກາດໃຫ້ຊາວກະສິກອນຜູ້ລ້ຽງສັດຂະໜາດນ້ອຍໄດ້ມີໂອກາດເຂົ້າຮ່ວມໃນຂະບວນການຕະຫລາດ

– ສປປ ລາວ ມີປະມານ **696.870** ຄົວເຮືອນ ຫລື ເທົ່າກັບ **68,5%** ຂອງຄົວເຮືອນທົ່ວປະເທດ ມີການລ້ຽງສັດ *(census MAF 2011)*

–ການຊຸກຍູ້ ແລະ ພັດທະນາ ການລ້ຽງສັດຂອງຊາວກະສິກອນຂະໜາດນ້ອຍ ຈະເປັນການປະກອບສ່ວນທີ່ສຳຄັນ ທີ່ຈະຫລຸດຜ່ອນຄວາມເທົ່າທຽມກັນຂອງຄົນໃນສັງຄົມ

## ເປົ້າໝາຍທີ 16 : ຍຸດຕິທຳ, ເອກະພາບ ແລະ ເຂັ້ມແຂງຂອງສະຖາບັນ

ທຳມະຊາດ

ລະບົບ
ການ
ລ້ຽງສັດ

ຄົນ

✓ການຕໍ່ສູ້ ໃນການນຳໃຊ້ຊັບພະຍາກອນທຳມະຊາດ (ທົ່ງຫຍ້າ..) ສາມາດນຳໄປສູ່ການໃຊ້ຄວາມຮຸນແຮງໃນຊຸມຊົນໄດ້ ຄວາມບໍ່ໝັ້ນຄົງຂອງການຖືສິດຄອບຄອງ ຈະເປັນສາເຫດຕົ້ນຕໍຂອງຄວາມຂັດແຍ້ງ ລະຫວ່າງຜູ້ລ້ຽງສັດ ແລະ ບໍ່ໄດ້ລ້ຽງສັດໃນຊຸມຊົນ ນອກຈາກນີ້, ຄວາມສ່ຽງຂອງການເກີດພະຍາດລະບາດສັດ ອື່ນໆ ສ້າງຂໍ້ຂັດແຍ່ງໄດ້

– ***ການກຳນົດເຂດ*** ການລ້ຽງສັດທີ່ແນ່ນອນ ເພື່ອຄຸ້ມຄອງ, ພັດທະນາ ແລະ ລົງທຶນໃສ່ ຕາມເງື່ອນໄຂທ່າແຮງທີ່ມີ ຈະເປັນການປະກອບສ່ວນຂອງການຂັດແຍ່ງໃນຊຸມຊົນ

**SDGs : ກັບເປົ້າໝາຍການພັດທະນາຊັບພະຍາກອນທຳມະຊາດ ແລະ ດິນຟ້າອາກາດ**

## ເປົ້າໝາຍທີ 6 : ນ້ຳສະອາດ ແລະ ສຸຂານາໄມ

*ທຳມະຊາດ*

ລະບົບ
ການ
ລ້ຽງສັດ

ຄົນ

✓ການນຳໃຊ້ນ້ຳເຂົ້າເພື່ອການລ້ຽງສັດມີສູງເຖິງ 8% ຂອງນ້ຳຈືດໃນທົ່ວໂລກ(FAO *2014)*, ນ້ຳບໍ່ພຽງແຕ່ໃຊ້ໃນການໃຫ້ສັດດື່ມ ແຕ່ຍັງໃຊ້ເຂົ້າໃນການປູກຫຍ້າ ແລະ ພືດອາຫານສັດ, ການປຸງແຕ່ງຜະລິດຕະພັນສັດ

– ***ການກຳນົດເຂດ*** ການລ້ຽງສັດທີ່ແນ່ນອນ ເພື່ອຄຸ້ມຄອງ, ພັດທະນາ ແລະ ລົງທຶນໃສ່ ຕາມເງື່ອນໄຂທ່າແຮງທີ່ມີ ຈະເປັນການປະກອບສ່ວນຂອງການຂັດແຍ່ງໃນຊຸມຊົນ

## ເປົ້າໝາຍທີ 7: ພະລັງງານປະຢັດ ແລະ ສະອາດ

*ທຳມະຊາດ* ລະບົບ ການ ລ້ຽງສັດ *ຄົນ*




✓ການລ້ຽງສັດສາມາດສ້າງແຫຼ່ງພະລັງງານເຊື້ອໄຟ ທີ່ປະຢັດ ແລະ ສະອາດ ໂດຍການເຮັດບໍ່ແກັສຊີວະພາບ(ຈາກມູນສັດຜ່ານການຍ່ອຍແບບບໍ່ມີອົກຊີແຊນ) ຜ່ານມາມູນສັດມັກຈະຖືກລະເລີຍ ແລະ ປ່ອຍໃຫ້ເປັນມົນລະພິດ
– ການໝັກເພື່ອຜະລິດອາຍແກັສຊີວະພາບ (ມີສ່ວນອາຍແກັສເມຕານເປັນສ່ວນໃຫຍ່) ສາມາດໃຊ້ເປັນພະລັງງານເຊື້ອໄຟໃນຍານພາຫະນະ, ໃນໂຮງໄຟຟ້າຂະໜາດໃຫຍ່ ແລະ ໃຊ້ປຸງແຕ່ງອາຫານຢູ່ໃນຄົວເຮືອນ....
– ກາກມູນລົ້ນ ສິ່ງເສດເຫລືອຈາກການໝັກ ຍັງກາຍເປັນຝຸ່ນຊີວະພາບຊັ້ນດີ ສຳລັບການປູກຝັງ
– ການຊຸກຍູ້,ສົ່ງເສີມການນຳໃຊ້ພະລັງງານຈາກມູນສັດ ເປັນການປະກອບສ່ວນຢ່າງໃຫຍ່ຫລວງ ໃນການສະໜອງພະລັງງານປະຢັດ ແລະ ສະອາດ.

## ເປົ້າໝາຍທີ 13: ການຈັດຕັ້ງປະຕິບັດ ດ້ານດິນຟ້າອາກາດ

*ທຳມະຊາດ* ລະບົບ ການ ລ້ຽງສັດ *ຄົນ*




ປະເດັນຜົນກະທົບຈາກການລ້ຽງສັດຕໍ່ສິ່ງແວດລ້ອມກຳລັງໄດ້ຮັບຄວາມສົນໃຈຢ່າງກວ້າງຂວາງຄື ການເປັນແຫລ່ງກຳເນີດ ອາຍແກັດເຮືອນແກ້ວ (Greenhouse Gases) ເປັນຕົ້ນ ອາຍແກັສເມຕານ ($CH_4$) ອາຍແກັສ ໄນຕຣັສອອກຊີ ($N_2O$) ແລະ ອາຍແກັສກາກໂບນິກ($CO_2$) ທີ່ເຮັດໃຫ້ເກີດພາວະໂລກຮ້ອນ (Global Warming Potential) ແລະ ການປ່ຽນແປງດິນຟ້າອາກາດ (Climate Change)
– ເຖິງຢ່າງໃດກໍ່ຕາມມີຜົນການສຶກສາເຫັນກົງກັນວ່າ ການຈັດການຟາມທີ່ດີ ເຊັ່ນ: ຈັດການດ້ານອາຫານສັດ(ໃຫ້ອາຫານສັດທີ່ດີ ເພີ້ມຜົນຜະລິດແລະຫລຸດອາຍແກັສ $CH_4$ ), ຈັດການມູນສັດ ( ສ້າງບໍ່ແກັສຊີວະພາບ) ຫລຸດການໃຊ້ພະລັງງານໄຟຟ້າຢູ່ໃນຟາມ ແລະ ປັບປຸງດິນປູກຫຍ້າ ສ້າງສະພາບແວດລ້ອມທີ່ດີໃຫ້ແກ່ຟາມ ເປັນການປະກອບສ່ວນໃນການຫລຸດພາວະໂລກຮ້ອນຢ່າງເປັນຮູບປະທຳໄດ້

## ເປົ້າໝາຍທີ 15: ຊີວິດຢູ່ເທິງໜ້າດິນ

*ທຳມະຊາດ* **ລະບົບການລ້ຽງສັດ** ດິນ




ການລ້ຽງສັດໃນທົ່ວໂລກມີການຂະຫຍາຍຕົວສູງ ເຊິ່ງ26%ຂອງເນື້ອທີ່ດິນແມ່ນທົ່ງຫຍ້າລ້ຽງສັດທຳມະຊາດ ແລະ 33% ແມ່ນດິນໃຊ້ໃນການປູກຝັງ (1/3 ແມ່ນເພື່ອຜະລິດອາຫານສັດ) ເຊິ່ງການຜະລິດສັດ ບໍ່ວ່າຈະເປັນຜົນກະທົບທາງດ້ານບວກ ຫລື ລົບ ຕໍ່ຄວາມຫລາກຫລາຍທາງດ້ານຊີວະນາໆພັນຂຶ້ນຢູ່ກັບຮູບແບບການລ້ຽງເຊັ່ນ: ການລ້ຽງສັດແບບປະປ່ອຍຫລາຍເຮັດໃຫ້ດິນເຊື່ອມໂຊມ ພັງທະລາຍ ແລະ ການຖາງປ່າເພື່ອມາເຮັດຄັງ ຫລື ທົ່ງຫຍ້າລ້ຽງສັດຈະສ້າງໃຫ້ເກີດຜົນເສຍຕໍ່ຊັບພະຍາກອນດິນ ແລະ ຊັບພະຍາກອນປ່າໄມ້ຢ່າງເຫັນໄດ້ຈະແຈ້ງ.
–ການປັບປຸງ ຈັດການທົ່ງຫຍ້າລ້ຽງສັດທີ່ດີເຮັດໃຫ້ມີການຟື້ນຟູນຳໃຊ້ທົ່ງຫຍ້າທີ່ມີຄຸນນະພາບດີ ແລະ ຍາວນານ (ປູກພືດພຸ່ມເພື່ອປ້ອງກັນດິນເຊາະເຈື່ອນ, ພືດຕະກຸນຖົ່ວເພື່ອກັກເກັບໄນໂຕຣເຈນ ເພີ່ມຜົນຜະລິດ ແລະ ປັບປຸງຄຸນນະພາບດິນ....)

- ການປັບໂຕຂອງການຜະລິດໃຫ້ເຂົ້າກັບສະພາບການປ່ຽນແປງຖືໄດ້ວ່າເປັນອົງປະກອບທີ່ສຳຄັນໃນການ ຮັກສາຄວາມປອດໄພສະບຽງອາຫານ.
- ຄວາມຫລາກຫລາຍທາງພັນທຸກຳຂອງສັດ ເປັນຊັບພະຍາກອນທີ່ມີຄ່າ ສຳລັບການລ້ຽງສັດ ແລະ ສັງຄົມ ໃນການເອົາຊະນະສິ່ງທ້າທາຍໃນອານາຄົດ ແລະ ຄວນຈະໄດ້ຮັບການອະນຸລັກ

# ບົດຍັງມີສືບຕໍ່ ພາຍຫຼັງ

(ຢູ່ໃນຂັ້ນຕອນເກັບກຳ)